**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ ເລກທີ 0109 /ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 21 ມັງກອນ 2026

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບລາຄານ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 132/ຄປຈ, ລົງວັນທີ 09 ເມສາ 2025;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1685/ຫສນຍ, ລົງວັນທີ 07 ຕຸລາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 1999/ອຄ,ລົງວັນທີ 09 ກັນຍາ 2025;
- ອີງຕາມ ແຈ້ງການ ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 3982/ຫກ, ລົງວັນທີ 17 ທັນວາ 2025;
- ອີງຕາມ ທິດຊີ້ນຳຂອງຄະນະນຳ ກະຊວງ ອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 21 ມັງກອນ 2026;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟທຸກຊະນິດ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ປັບລາຄານ້ຳມັນເຊື້ອໄຟ ຄື: ນ້ຳມັນແອັດຊັງພິເສດ ແລະ ນ້ຳມັນແອັດຊັງທຳມະດາ ປັບລົງ 130 ກີບ/ລິດ, ສ່ວນນ້ຳມັນກາຊວນ ປັບຂຶ້ນ 380 ກີບ/ລິດ.

   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງ:

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 25,740 | 25,610 | - 130 | 0.51 | |
| 2 | ອຊ ທຳມະດາ | 22,260 | 22,130 | - 130 | 0.58 | |
| 3 | ກາຊວນ | 18,460 | 18,840 | 380 | 2.06 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດ ວັນທີ 22 ມັງກອນ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0108/ກຄພນ, ລົງວັນທີ 21 ມັງກອນ 2025 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ,ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0051/ກຄພນ, ລົງວັນທີ 14 ມັງກອນ 2026.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

SVX

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ສັນຕິສຸກ ພູນສະຫວັດ

<u>ບ່ອນສົ່ງ:</u>
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຄະນະເລຂາທິການ, ສະພາແຫ່ງຊາດ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 22 ມັງກອນ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **25,610** | **22,130** | **18,840** |
| 2 | ແຂວງຜົ້ງສາລີ | **26,600** | **23,120** | **19,830** |
| 3 | ແຂວງຫຼວງນ້ຳທາ | **26,100** | **22,630** | **19,330** |
| 4 | ແຂວງອຸດົມໄຊ | **26,280** | **22,800** | **19,510** |
| 5 | ແຂວງບໍ່ແກ້ວ | **25,710** | **22,230** | **18,940** |
| 6 | ແຂວງຫຼວງພະບາງ | **26,120** | **22,640** | **19,350** |
| 7 | ແຂວງໄຊຍະບູລີ | **25,930** | **22,460** | **19,170** |
| 8 | ແຂວງຫົວພັນ | **26,110** | **22,640** | **19,350** |
| 9 | ແຂວງຊຽງຂວາງ | **25,800** | **22,320** | **19,030** |
| 10 | ແຂວງວຽງຈັນ | **25,610** | **22,130** | **18,840** |
| 11 | ແຂວງບໍລິຄຳໄຊ | **25,660** | **22,180** | **18,890** |
| 12 | ແຂວງຄຳມ່ວນ | **25,640** | **22,160** | **18,870** |
| 13 | ແຂວງສະຫວັນນະເຂດ | **25,640** | **22,160** | **18,870** |
| 14 | ແຂວງສາລະວັນ | **25,890** | **22,420** | **19,130** |
| 15 | ແຂວງຈຳປາສັກ | **25,670** | **22,190** | **18,900** |
| 16 | ແຂວງເຊກອງ | **25,890** | **22,410** | **19,130** |
| 17 | ແຂວງອັດຕະປື | **25,940** | **22,460** | **19,170** |
| 18 | ແຂວງໄຊສົມບູນ | **26,030** | **22,550** | **19,270** |

ນະຄອນຫຼວງວຽງຈັນ, ວັນທີ 21 ມັງກອນ 2026